# ຂະບວນການສ້າງຄວາມເຫັນດີເຫັນພ້ອມ ແບບຕື່ນຕົວສະໝັກໃຈ ໂດຍມີການແຈ້ງຂໍ້ມູນໃຫ້ຮູ້ລ່ວງໜ້າ, ທຶນກະສິກຳ ແລະ ປ່າໄມ້ບ້ານ

## Free, Prior and Informed Consent (FPIC)
## Village Forest and Agriculture Grants (VFAG)


© GIZ/Solasack Chalernkeo

## ຈຸດປະສົງ

ຈຸດປະສົງຕົ້ນຕໍ ຂອງ ຂະບວນການສ້າງຄວາມເຫັນດີເຫັນພ້ອມ ແບບຕື່ນຕົວສະໝັກໃຈ ໂດຍມີການແຈ້ງຂໍ້ມູນໃຫ້ຮູ້ລ່ວງໜ້າ (FPIC) ແມ່ນເພື່ອຮັບປະກັນວ່າ ຊຸມຊົນໄດ້ຮັບຂໍ້ມູນ ຢ່າງຄົບຖ້ວນ ກ່ຽວກັບໂຄງການ, ບໍ່ວ່າຈະເປັນ ເປົ້າໝາຍ, ກິດຈະກຳ, ແລະ ຜົນກະທົບ, ເພື່ອເຮັດໃຫ້ເຂົາເຈົ້າໃຫ້ຄວາມເຫັນດີເຫັນພ້ອມ ຢ່າງອິດສະຫຼະ. ຈຸດສຳຄັນ ຂອງ ຂະບວນການ FPIC ປະກອບມີ:

**Free:** (ແບບຕື່ນຕົວສະໝັກໃຈ) ຄວາມເຫັນດີເຫັນພ້ອມ ທີ່ໄດ້ມາ ຕ້ອງບໍ່ມີການບັງຄັບ ຫຼື ການຊັກຈູງໃຈ.

**Prior:** (ລ່ວງໜ້າ) ຊຸມຊົນ ຄວນມີເວລາພຽງພໍ ໃນການທົບທວນຄືນຂໍ້ມູນກ່ຽວກັບໂຄງການ ກ່ອນທີ່ກິດຈະກຳຈະເລີ່ມຈັດຕັ້ງປະຕິບັດ.

**Informed:** (ແຈ້ງຂໍ້ມູນໃຫ້ຮູ້) ຂໍ້ມູນຂ່າວສານທີ່ແຈ້ງໃຫ້ຮູ້ ຕ້ອງມີ ລາຍລະອຽດກ່ຽວກັບຜົນກະທົບ ທີ່ອາດຈະເກີດຂຶ້ນ ແລະ ນຳສະເໜີ ໃນລັກສະນະທີ່ເຂົ້າໃຈໄດ້ງ່າຍ.

**Consent:** (ຄວາມເຫັນດີເຫັນພ້ອມ) ຊຸມຊົນ ມີສິດທີ່ຈະຕັດສິນເຫັນດີ ຫຼື ບໍ່ເຫັນດີ ແລະ ສາມາດຖອນ ຄວາມເຫັນດີເຫັນພ້ອມໄດ້ ຖ້າຜົນ ກະທົບທາງລົບເກີດຂຶ້ນ.

ນອກຈາກນັ້ນ, ທຶນກະສິກຳ ແລະ ປ່າໄມ້ບ້ານ (VFAG) ຍັງເລັງໃສ່ ການສ້າງຕັ້ງຄະນະກຳມະການ, ຮັບຮອງກົດລະບຽບ, ສະໜອງການຝຶກອົບຮົມດ້ານການເງິນໃຫ້ແກ່ຄະນະ VFAGC, ແລະ ເປີດບັນຊີທະນາຄານເພື່ອຮັບປະກັນຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບໃນສິ່ງທີ່ຈັດຕັ້ງປະຕິບັດ ກ່ຽວກັບບັນຫາການເງິນ ພາຍໃນບ້ານ.

## ແນວທາງປະຕິບັດ

ເລີ່ມຕົ້ນດ້ວຍ ການດຳເນີນກອງປະຊຸມປຶກສາຫາລື FPIC1 ໃນເບື້ອງຕົ້ນ ຢູ່ບັນດາບ້ານຕ່າງໆ ເພື່ອນຳສະເໜີ ຄວາມເປັນມາຂອງໂຄງການ, ເປົ້າໝາຍ, ຈຸດປະສົງ, ກິດຈະກຳ, ຜົນກະທົບທັງດ້ານບວກ ແລະ ດ້ານລົບ. ອະທິບາຍກົນໄກແກ້ໄຂຄຳຮ້ອງທຸກ (GRM) ຢ່າງລະອຽດ ແລະ ຈະແຈ້ງ ເພື່ອຮັບປະກັນວ່າ ຊາວບ້ານເຂົ້າໃຈໂຄງການ ຢ່າງຄົບຖ້ວນ.

ຫຼັງຈາກນີ້, ແມ່ນຈະປ່ອຍໃຫ້ອຳນາດການປົກຄອງບ້ານ ແລະ ຊາວບ້ານ ດຳເນີນການປຶກສາຫາລືພາຍໃນຂອງເຂົາເຈົ້າເອງ. ຈາກນັ້ນ ຊາວບ້ານຈະລົງຄະແນນສຽງ ວ່າຈະເຂົ້າຮ່ວມ, ປະຕິເສດ, ຫຼື ຂໍເວລາເພີ່ມຕື່ມ ເພື່ອພິຈາລະນາໂຄງການ. ຫຼັງຈາກ ຂະບວນການ FPIC1, ກິດຈະກຳ PLUP, VFAG, PSAP, ແລະ VFMP, ແມ່ນຈະສືບຕໍ່ ການປຶກສາຫາລືຄັ້ງທີ 2 ຫຼື “FPIC 2” ເພື່ອທົບທວນຄືນ ກິດຈະກຳຂອງໂຄງການ ແລະ ນຳສະເໜີ ຮ່າງສັນຍາ ຄຸ້ມຄອງ/ອະນຸລັກປ່າໄມ້ບ້ານ.

ສຳລັບ “FPIC 3”: ແມ່ນຈະນຳສະເໜີ ຮ່າງສັນຍາ ການຄຸ້ມຄອງ / ອະນຸລັກປ່າໄມ້ບ້ານ ກັບ ຊາວບ້ານ ແລະ ຈະສະຫລຸບດ້ວຍພິທີລົງນາມ ໃນສັນຍາດັ່ງກ່າວນີ້.

## ຜົນໄດ້ຮັບທີ່ໄດ້ບັນລຸ


© GIZ/Solasack Chalernkeo

### FP117

**170** ບ້ານທີ່ໂຄງການກວມເອົາ

ໄດ້ຕອບຮັບ ເຂົ້າຮ່ວມໂຄງການ 1 ແລະ ໄດ້ລົງນາມໃນສັນຍາວ່າດ້ວຍການຄຸ້ມຄອງປ່າໄມ້ບ້ານ ຫຼື ຮ່າງ ສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ໃນ 3 ແຂວງ (ແຂວງ ຫົວພັນ, ຫຼວງພະບາງ ແລະ ໄຊຍະບູລີ).

**ການເຂົ້າຮ່ວມ ແລະ ລົງຄະແນນສຽງ ຂອງຊາວບ້ານ ຢູ່ໃນກິດຈະກຳ FPIC**

| FPIC 1 | FPIC 2 | FPIC 3 |
|---|---|---|
| 16,211 ຄົນ | 11,230 ຄົນ | 6,272 ຄົນ |
| (16,176 ຄົນ ຕອບຮັບ, 23 ຄົນ ບໍ່ຕອບຮັບ, ແລະ 12 ຄົນ ສະຫຼະສິດ) ຍິງ 8840 ຄົນ (54%) | (ຍິງ 5,578 ຄົນ 49,7%) | (ຍິງ 2,985 ຄົນ 47,6%) |

### FP200

**290** ບ້ານທີ່ໂຄງການກວມເອົາ

ໄດ້ຕອບຮັບ ເຂົ້າຮ່ວມໂຄງການ 2 ໃນ 6 ແຂວງ (ແຂວງ ຫົວພັນ, ຫຼວງພະບາງ, ໄຊຍະບູລີ, ອຸດົມໄຊ, ບໍ່ແກ້ວ ແລະ ຫຼວງນ້ຳທາ).

**ການເຂົ້າຮ່ວມ ແລະ ລົງຄະແນນສຽງ ຂອງຊາວບ້ານ ຢູ່ໃນກິດຈະກຳ FPIC**

FPIC 1

**20,510** ຄົນ

(ຍິງ 10,076 ຄົນເທົ່າກັບ 49.13%)

**VFAG**

ຊາວບ້ານ **16,631** ຄົນ

ບ້ານ **7,697** ບ້ານ

ສະມາຊິກຂອງ ຄະນະ **891** ຄົນ

(ຍິງ 517 ຄົນ ເທົ່າກັບ 58%)

# ການວາງແຜນການນຳໃຊ້ທີ່ດິນ ແບບມີສ່ວນຮ່ວມ

## Participatory Land Use Planning 2.0



© GIZ/Khamsai Inthavong

## ຈຸດປະສົງ

ອົງປະກອບນີ້ ປະກອບດ້ວຍ ການສຳຫລວດ ແລະ ທຳຄວາມເຂົ້າໃຈ ປະເພດການນຳໃຊ້ທີ່ດິນຂອງບ້ານ ແລະ ການສ້າງເຂດຄຸ້ມຄອງການນຳໃຊ້ທີ່ດິນໃນອະນາຄົດ (FLUMZ) ໂດຍຮ່ວມມືກັບ ຊາວບ້ານທ້ອງຖິ່ນ ແລະ ຄະນະກຳມະການ ຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ

ອົງປະກອບນີ້ ແນໃສ່ການເພີ່ມທະວີຄວາມຫມັ້ນຄົງດ້ານການຄອບຄອງທີ່ດິນຊຸມຊົນ ແລະ ສົ່ງເສີມການຜະລິດກະສິກຳຂະຫນາດນ້ອຍທີ່ມີຄວາມຫລາກຫລາຍ ແລະ ມີຄວາມຍືນຍົງ (ການຜະລິດກະສິກຳທີ່ບໍ່ມີການທຳລາຍປ່າໄມ້) ແລະ ການຄຸ້ມຄອງປ່າໄມ້ບ້ານ. PLUP 2.0 ສະຫນອງ ຂໍ້ມູນພື້ນຖານສຳລັບການວາງແຜນການຄຸ້ມຄອງປ່າໄມ້ບ້ານ (VFMP), ການສົ່ງເສີມການຜະລິດກະສິກຳແບບຍືນຍົງ (PSAP), ແລະ ການຂຶ້ນທະບຽນ ຫຼື ການອອກໃບຕາດິນໃນອະນາຄົດ.

1. **ການສຳຫລວດ ແລະ ທຳຄວາມເຂົ້າໃຈ ປະເພດການນຳໃຊ້ທີ່ດິນພາຍໃນບ້ານ**
   ແລະ ການດຳເນີນການ ກຳນົດເຂດຄຸ້ມຄອງການນຳໃຊ້ທີ່ດິນ ໃນອະນາຄົດ (FLUMZ) ແບບມີສ່ວນຮ່ວມ.
2. **ການສົ່ງເສີມ ການຜະລິດກະສິກຳ ທີ່ບໍ່ມີການທຳລາຍປ່າໄມ້ ແລະ ການຄຸ້ມຄອງປ່າໄມ້ບ້ານ**
3. **ເພີ່ມທະວີຄວາມຫມັ້ນຄົງ ດ້ານການຄອບຄອງທີ່ດິນໃຫ້ແກ່ຊຸມຊົນ**
4. **ສະຫນອງຂໍ້ມູນພື້ນຖານ**
   ໃຫ້ແກ່ການວາງແຜນຄຸ້ມຄອງປ່າໄມ້ບ້ານ, ການສົ່ງເສີມ ການຜະລິດກະສິກຳແບບຍືນຍົງ ແລະ ການຂຶ້ນທະບຽນທີ່ດິນ ຫຼື ການອອກໃບຕາດິນ ໃນອະນາຄົດ.

## ແນວທາງປະຕິບັດ

ການລິເລີ່ມ ກິດຈະກຳ PLUP 2.0, ທີ່ຖືກຈັດຕັ້ງປະຕິບັດໂດຍ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ (DoNRE) ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ (DAFO), ສຸມໃສ່ **ການຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແບບຍືນຍົງ** ອົງປະກອບຕົ້ນຕໍ ປະກອບມີ ການສ້າງຕັ້ງຄະນະກຳມະການຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ (VLFMC) ແລະ ການເກັບກຳຂໍ້ມູນ ເສດຖະກິດ-ສັງຄົມ, ທີ່ດິນ ແລະ ປ່າໄມ້ ພາຍໃນບ້ານ. ນອກຈາກນັ້ນ, ມັນຍັງກ່ຽວຂ້ອງກັບ ການປັກຫຼັກຫມາຍເຂດແດນ ລະຫວ່າງບ້ານ ຕໍ່ບ້ານ ແລະ ການປະເມີນການນຳໃຊ້ທີ່ດິນໃນປັດຈຸບັນ ແລະ ຄວາມປົກຫຸ້ມຂອງປ່າໄມ້ (CLUFC). ນອກຈາກນັ້ນ, ແຜນການລິເລີ່ມ ເຂດຄຸ້ມຄອງການນຳໃຊ້ທີ່ດິນໃນອະນາຄົດ (FLUMZ) ແລະ ການສ້າງລະບຽບການຂອງບ້ານເພື່ອຮັບປະກັນການປະຕິບັດ ການຄຸ້ມຄອງທີ່ດິນ ໃຫ້ມີປະສິດທິພາບ ແລະ ມີຄວາມຍືນຍົງ.

## ຜົນໄດ້ຮັບທີ່ໄດ້ບັນລຸ



© GIZ/Vansana Insal

ພະນັກງານລັດຖະກອນທ້ອງຖິ່ນ ຫຼາຍກວ່າ 192 ຄົນ ຈາກ 6 ແຂວງເປົ້າຫມາຍ (27 ເມືອງ) ໄດ້ຮັບ ການຝຶກອົບຮົມ ກ່ຽວກັບ PLUP 2.0 ແລະ ສາມາດຈັດຕັ້ງປະຕິບັດ PLUP ໃນລະດັບບ້ານ ດ້ວຍຕົນເອງ.

ຄະນະ VLFMC ໄດ້ຖືກສ້າງຕັ້ງຂຶ້ນ ແລະ ໄດ້ຮັບ ການຝຶກອົບຮົມ ກ່ຽວກັບ PLUP ໃນ 473 ບ້ານ (ຄວາມຄືບຫນ້າຮອດ ເດືອນ ກັນຍາ 2025) ແລະ ຈະສືບຕໍ່ໃນອີກ 99 ບ້ານທີ່ຍັງເຫຼືອ.

PLUP 2.0 ໄດ້ຖືກດຳເນີນຢູ່ໃນ 473 ບ້ານ ແລະ ເຮັດໃຫ້ການນຳໃຊ້ທີ່ດິນ ມີຄວາມຍືນຍົງ ຫຼາຍຂຶ້ນ ໃນເນື້ອທີ່ຫຼາຍກວ່າ 1,871,800 ເຮັກຕາ (ຕົວເລກໃນເດືອນ ກັນຍາ 2025) ສ່ວນ ຍັງເຫຼືອ 99 ບ້ານ ແມ່ນຈະສືບຕໍ່ຈົນຮອດກາງປີ 2026.

ຊາວບ້ານຈຳນວນ 250,166 ຄົນ (ຍິງ 49.6%) ໄດ້ຮັບການຊ່ວຍເຫຼືອ/ໄດ້ເຂົ້າຮ່ວມໃນການພັດທະນາແຜນນຳໃຊ້ທີ່ດິນຂອງບ້ານ (ຂໍ້ມູນຄວາມຄືບຫນ້າ ຮອດ ເດືອນກັນຍາ 2025)

ການ ຮ່ວມມື ເຢຍລະມັນ
DEUTSCHE ZUSAMMENARBEIT

GREEN CLIMATE FUND

Implemented by
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

# ການສົ່ງເສີມ ການຜະລິດກະສິກຳ ແບບຍືນຍົງ

## Promotion of Sustainable Agriculture Practices (PSAP)



© GIZ/Vansana Insal

## ຈຸດປະສົງ

ການນຳໃຊ້ ລະບົບການຜະລິດກະສິກຳ ແບບຍືນຍົງ, ມີຄວາມທົນທານຕໍ່ສະພາບດິນຟ້າອາກາດ ແລະ ບໍ່ມີການຕັດໄມ້ທຳລາຍປ່າ ໄດ້ຫລຸດຜ່ອນ ຄວາມສ່ຽງຕໍ່ການປ່ຽນແປງດິນຟ້າອາກາດ ແລະ ໄດ້ປັບປຸງ ຊີວິດການເປັນຢູ່ ຂອງ ຊາວກະສິກອນ. ການສະໜັບສະໜູນ ແລະ ການອຳນວຍຄວາມສະດວກ ແກ່ ການລົງທຶນແບບຍືນຍົງ ໃນຕ່ອງໂສ້ມູນຄ່າ ກະສິກຳ ໂດຍ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSME) ໄດ້ ປັບປຸງ ການເຂົ້າເຖິງຕະຫຼາດ ຂອງ ຊາວກະສິກອນ.

**1 ແກ້ໄຂບັນດາສາເຫດຕົ້ນຕໍ ທີ່ພາໃຫ້ເກີດມີ ການຕັດໄມ້ທຳລາຍປ່າ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ**

ປະກອບສ່ວນເຂົ້າໃນ ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຜ່ານທາງ ການຫລຸດຜ່ອນ ການຂະຫຍາຍ ກິດຈະກຳກະສິກຳ ເຂົ້າໄປໃນ ພູມີທັດປ່າໄມ້.

**2 ການສົ່ງເສີມ ການຜະລິດກະສິກຳແບບຍືນຍົງ**

ກຳນົດຕົວແບບການເຮັດກະສິກຳ ແບບຍືນຍົງ 32 ຕົວແບບ ຢູ່ໃນ "ບັນຊີຂາວ" ສຳລັບ ໂຄງການ GCF1 ແລະ 12 ຕົວແບບ ສຳລັບ ໂຄງການ GCF2.

**3 ເນັ້ນໃສ່ລະບົບຕ່ອງໂສ້ມູນຄ່າກະສິກຳ**

ຂອງ ຜູ້ມີບົດບາດ ຈາກ ພາກເອກະຊົນ (ຈຸນລະວິສະຫາກິດ, ວິສະຫາກິດຂະໜາດນ້ອຍ ແລະ ກາງ ທີ່ເຮັດທຸລະກິດກະສິກຳ), ແລະ ການແກ້ໄຂ ດ້ານຕະຫຼາດ ເພື່ອຫລຸດຜ່ອນ ການທຳລາຍປ່າໄມ້.

**4 ການສົ່ງເສີມບົດບາດຍິງ-ຊາຍ**

ແລະ ໄວໜຸ່ມ ຮັບປະກັນຄວາມສະເໝີພາບ ລະຫວ່າງຍິງ-ຊາຍ ໂດຍສຸມໃສ່ 3 R (Rights (ສິດ), Representation (ການເປັນຕົວແທນ), Responsibility (ໜ້າທີ່ຮັບຜິດຊອບ).

## ແນວທາງປະຕິບັດ

ແນວທາງປະຕິບັດ "ການສົ່ງເສີມ ການຜະລິດກະສິກຳ ແບບຍືນຍົງ" (PSAP) ມີບົດບາດສຳຄັນ ຢູ່ໃນໂຄງການ "ປ້ອງກັນດິນຟ້າອາກາດ ໂດຍຫລີກລ່ຽງການທຳລາຍປ່າໄມ້" ທີ່ຫລຸດຜ່ອນ ການຂະຫຍາຍທີ່ດິນກະສິກຳ ຢູ່ໃນພື້ນທີ່ປ່າໄມ້ ທີ່ສົ່ງຜົນໃຫ້ເກີດມີ ຄວາມເສື່ອມໂຊມ ຂອງ ປ່າໄມ້. ໃນການສະໜອງ ການສະໜັບສະໜູນທາງດ້ານເຕັກນິກ ແລະ ການເງິນແກ່ຊາວກະສິກອນ, ແນວທາງປະຕິບັດ PSAP ສ້າງສິ່ງຈູງໃຈ ແລະ ອຳນວຍຄວາມສະດວກໃຫ້ແກ່ ການຮັບຮອງເອົາ ການຜະລິດກະສິກຳແບບຍືນຍົງ, ທີ່ທົນທານຕໍ່ການປ່ຽນແປງຂອງ ດິນຟ້າອາກາດ ແລະ ບໍ່ມີການທຳລາຍປ່າໄມ້ ຢູ່ເຂດຊົນນະບົດ. "ບັນຊີຂາວ" ເປັນແນວທາງປະຕິບັດວຽກງານ PSAP ດ້ວຍການກຳນົດພືດ ແລະ ລະບົບການຜະລິດທີ່ເໝາະສົມ ແລະ ສອດຄ່ອງກັບຈຸດປະສົງຂອງໂຄງການ. ກິດຈະກຳ PSAP ຖືກຈັດຕັ້ງປະຕິບັດ ໃນທົ່ວ 6 ແຂວງຂອງລາວ ຄື: ແຂວງໄຊຍະບູລີ, ຫົວພັນ, ຫຼວງພະບາງ, ບໍ່ແກ້ວ, ອຸດົມໄຊ ແລະ ຫຼວງນ້ຳທາ. ຄອບຄົວທີ່ເຂົ້າຮ່ວມກິດຈະກຳ PSAP ຈະໄດ້ຮັບການສະໜັບສະໜູນທາງດ້ານການເງິນເພື່ອລົງທຶນເບື້ອງຕົ້ນສຳລັບການຫັນເປັນການຜະລິດກະສິກຳແບບຍືນຍົງ. ສິ່ງດັ່ງກ່າວນີ້ແມ່ນຈະຖືກປະຕິບັດດ້ວຍການຝຶກອົບຮົມດ້ານວິຊາການ ແລະ ການໃຫ້ຄຳປຶກສາ ໃນເວລາວຽກເຮັດວຽກຕົວຈິງ ໂດຍຜ່ານ ເຈົ້າໜ້າທີ່ພາກລັດໃນວຽກງານສົ່ງເສີມກະສິກຳ.

ແນວທາງປະຕິບັດແຕ່ລະຢ່າງ ແມ່ນຈະນອນຢູ່ໃນ ແນວທາງປະຕິບັດລວມ ຂອງ ໂຄງການ. ກິດຈະກຳກະສິກຳທັງໝົດ ແມ່ນຈະຖືກຈັດຕັ້ງປະຕິບັດ ໂດຍສົມທົບກັບ ການວາງແຜນ ການນຳໃຊ້ທີ່ດິນ ແບບມີສ່ວນຮ່ວມ ໃນລະດັບບ້ານ, ຄວາມເຫັນດີເຫັນພ້ອມທີ່ຈະແຈ້ງຈາກ ບ້ານ ແລະ ສອດຄ່ອງກັບແຜນຄຸ້ມຄອງປ່າໄມ້ທີ່ໄດ້ສ້າງຂຶ້ນແລ້ວ.

## ຄາດໝາຍ ຂອງ ໂຄງການ



© GIZ/Khamsai Inthavong

**170** **ບ້ານ** ໄດ້ຮັບທຶນ ສຳລັບຈັດຕັ້ງ ປະຕິບັດ ກິດຈະກຳ PSAP ຈາກ ທຶນ VFAG ຢູ່ໃນ ໂຄງການ GCF1.

**290** **ບ້ານ** ບ້ານ ທີ່ໄດ້ຮັບການສະໜັບສະໜູນ ພາຍໃຕ້ ໂຄງການ GCF2 ຈະໄດ້ຮັບທຶນສຳລັບ ຈັດຕັ້ງປະຕິບັດ ກິດຈະກຳ PSAP ເຊັ່ນດຽວກັນ.

ຈຸນລະວິສະຫາກິດ, ວິສະຫາກິດຂະໜາດ ນ້ອຍ ແລະ ກາງ ທີ່ເຮັດທຸລະກິດກະສິກຳ **ຈຳນວນ 60 ຫົວໜ່ວຍ** ໄດ້ຮັບການສະໜັບສະໜູນ ເພື່ອສົ່ງເສີມການດຳເນີນທຸລະກິດຂອງຕົນ ແລະ ເຮັດໃຫ້ພວກເຂົາສາມາດລົງທຶນ ໃນຕ່ອງໂສ້ມູນຄ່າກະສິກຳ ແບບຍືນຍົງ ທີ່ບໍ່ມີການຕັດໄມ້ທຳລາຍປ່າ.

ການ ຮ່ວມມື ເຢຍລະມັນ
DEUTSCHE ZUSAMMENARBEIT

GREEN CLIMATE FUND

Implemented by
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

# ການວາງແຜນ ການຄຸ້ມຄອງປ່າໄມ້

## Village Forest Management Planning (VFMP)


© GIZ/Thomas Okfen

## ຈຸດປະສົງ

ຈຸດປະສົງ ຂອງ ການວາງແຜນການຄຸ້ມຄອງປ່າໄມ້ບ້ານ ແມ່ນເພື່ອເສີມຂະຫຍາຍການມີສ່ວນຮ່ວມຂອງຊຸມຊົນ ແລະ ຄວາມເປັນເຈົ້າການດ້ວຍການສົ່ງເສີມການມີສ່ວນຮ່ວມ ແລະ ຄວາມຮັບຜິດຊອບຂອງຊາວບ້ານໃຫ້ຫລາຍຂຶ້ນ.

ແນວທາງປະຕິບັດ ການຄຸ້ມຄອງປ່າໄມ້ບ້ານ ແມ່ນແນໃສ່ ເພື່ອເພີ່ມທະວີ ຄວາມປົກຫຸ້ມຂອງປ່າໄມ້, ປັບປຸງສະພາບ ຂອງ ປ່າໄມ້, ຍົກລະດັບຊີວິດການເປັນຢູ່ ຂອງ ທ້ອງຖິ່ນ ໂດຍຜ່ານ ການນຳໃຊ້ຜະລິດຕະຜົນປ່າໄມ້ ແບບຍືນຍົງ ແລະ ຢ່າງເທົ່າທຽມກັນ.

ການວາງແຜນ ການຄຸ້ມຄອງປ່າໄມ້ບ້ານ (VFMP) ເປັນການສ້າງແຜນການຄຸ້ມຄອງປ່າໄມ້ປະຈຳປີ ແລະ 5 ປີ, ທີ່ກຳນົດກິດຈະກຳໃນທົ່ວສາມປະເພດປ່າໄມ້ ຄື: ປ່າສະຫງວນບ້ານ, ປ່າປ້ອງກັນບ້ານ ແລະ ປ່າຊົມໃຊ້ ຂອງບ້ານກິດຈະກຳທີ່ສຳຄັນປະກອບມີ: ການປັກຫລັກຫມາຍຂອບເຂດ, ການລາດຕະເວນ, ການປ້ອງກັນໄຟປ່າ, ແລະ ການຟື້ນຟູປ່າທຳມະຊາດ, ແລະ ອື່ນໆ.

### 1 ປ່າສະຫງວນ

ສຸມໃສ່ການອະນຸລັກ ຊີວະນາໆພັນ, ສັດປ່າ, ແລະ ເຄື່ອງປ່າຂອງດົງ (NTFP).

### 2 ປ່າປ້ອງກັນບ້ານ

ສຸມໃສ່ການປົກປັກຮັກສາ ແຫລ່ງນ້ຳ, ປ້ອງກັນການເຊາະເຈື່ອນຂອງ ດິນ ແລະ ປົກປັກຮັກສາ ຄວາມປົກຫຸ້ມ ຂອງປ່າໄມ້.

### 3 ປ່າຊົມໃຊ້ຂອງບ້ານ

ສຸມໃສ່ ເພື່ອຕອບສະຫນອງຄວາມຕ້ອງການຂອງຊຸມຊົນທ້ອງຖິ່ນໃນ ແຕ່ລະວັນ, ລວມທັງ ການເກັບກູ້ໄມ້, ໄມ້ຟືນ, ເຄື່ອງປ່າຂອງດົງ ແລະ ຜະລິດຕະພັນປ່າໄມ້ອື່ນໆ ເພື່ອນຳໃຊ້ໃນຄົວເຮືອນ.

## ແນວທາງປະຕິບັດ

ໂຄງການ ປະກອບດ້ວຍ ການຮ່ວມກັນປັກຫລັກຫມາຍຂອບເຂດປ່າໄມ້ທີ່ຖືກຕ້ອງ, ໂດຍມີການຮ່ວມມືກັບຊາວບ້ານ, ລວມທັງ ການຫມາຍ ແລະການສ້າງ ແຜນທີ່ປ່າໄມ້ບ້ານ, ການດຳເນີນການສຳຫລວດປ່າຊົມໃຊ້ຂອງບ້ານຂັ້ນພື້ນຖານ ເພື່ອສະຫນັບສະຫນູນ ການສ້າງແຜນການນຳໃຊ້. ນອກຈາກນັ້ນ, ໂຄງການຍັງຈະສ້າງແຜນການດຳເນີນງານປະຈຳປີ ແລະ ແຜນຄຸ້ມຄອງປ່າໄມ້ 5 ປີ. ໂຄງການຍັງສະຫນັບສະຫນູນການຈັດຕັ້ງປະຕິບັດແຜນດຳເນີນງານປະຈຳປີ (AOP) ດ້ວຍການສະຫນອງການສ້າງຄວາມອາດສາມາດໃຫ້ແກ່ຄະນະກຳມະການຄຸ້ມຄອງການນຳໃຊ້ທີ່ດິນຂັ້ນບ້ານ (VLUMC). ສິ່ງດັ່ງກ່າວ ຈະສຸມໃສ່ກິດຈະກຳທີ່ສຳຄັນຂອງ ແຜນ AOP, ທີ່ລວມມີ ການຕິດຕັ້ງປ້າຍປ່າໄມ້, ດຳເນີນການລາດຕະເວນປ່າ, ສະກັດກັ້ນໄຟໄຫມ້ລາມປ່າ, ແລະ ຈັດຕັ້ງປະຕິບັດກິດຈະກຳຟື້ນຟູປ່າໄມ້ບ້ານ.

## ຜົນໄດ້ຮັບທີ່ໄດ້ບັນລຸ



ຊາວບ້ານມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ແຜນການຄຸ້ມຄອງປ່າສະຫງວນແຫ່ງຊາດ 5 ແຫ່ງ ແລະ ອຸທະຍານແຫ່ງຊາດ 1 ແຫ່ງ. ຍິ່ງໄປ ກວ່ານັ້ນ, ຊາວບ້ານຍັງມີຄວາມຮັບຜິດຊອບຕໍ່ການຈັດຕັ້ງປະຕິບັດແຜນດຳເນີນງານປະຈຳປີ (AOP). ມັນເປັນການເສີມຂະຫຍາຍ ຄວາມອຸດົມສົມບູນຂອງປ່າໄມ້ ແລະ ຊີວະນາໆພັນ.

**ໂຄງການ 1**

**ເນື້ອທີ່ປ່າໄມ້ບ້ານ**

**569,583 ເຮັກຕາ**

**ແມ່ນຢູ່ພາຍໃຕ້ການຄຸ້ມຄອງ**

**ໂຄງການ 2**

**ເນື້ອທີ່ປ່າໄມ້ບ້ານ**

**269,000 ເຮັກຕາ**

**ແມ່ນຢູ່ພາຍໃຕ້ການຄຸ້ມຄອງ**

(ຂໍ້ມູນຖືກສ້າງຂຶ້ນ/ປັບປຸງ ໃນເດືອນສິງຫາ ປີ 2025)

# ລະບົບການຕິດຕາມ ການທຳລາຍປ່າໄມ້ຂັ້ນແຂວງ

## Provincial Deforestation Monitoring System (PDMS)



© GIZ/Souliya Ounavong

## ຈຸດປະສົງ

ລະບົບການຕິດຕາມກວດກາ ການທຳລາຍປ່າໄມ້ ຂັ້ນແຂວງ (PDMS) ຊ່ວຍໃຫ້ສາມາດກວດເບິ່ງ ການທຳລາຍປ່າໄມ້ຢ່າງທັນການຜ່ານທາງ ພາບຖ່າຍດາວທຽມ ສົມທົບກັບການລົງກວດສອບຕົວຈິງໃນພາກສະໜາມ.

ລະບົບກຳນົດມາດຕະຖານລາຍການສຳຫລວດ, ຮູບແບບການລາຍງານ ແລະ ຂັ້ນຕອນການເຮັດວຽກ ເພື່ອໃຫ້ ເຈົ້າໜ້າທີ່ຂັ້ນເມືອງ ແລະ ແຂວງ ສາມາດຕິດຕາມ, ບັງຄັບໃຊ້ ແລະ ສະໜັບສະໜູນ ການວັດແທກ, ການລາຍງານ, ແລະ ການພິສູດຢັ້ງຢືນຜົນງານ ຈາກ REDD+ (MRV).

---

## ແນວທາງປະຕິບັດ

ລະບົບ PDMS ປະຕິບັດຕາມ ຂະບວນການ ທີ່ມີສາມຂັ້ນຕອນ:

**1 ກວດຫາ (ທຸກອາທິດ, ໂດຍນຳໃຊ້ Google Earth Engine)**

ການກວດກາ ການສູນເສຍປ່າໄມ້ ໃນແຕ່ລະອາທິດ ແບບອັດຕະໂນມັດ ໂດຍນຳໃຊ້ພາບຖ່າຍດາວ ທຽມກັບ ການສົມທຽບ ກ່ອນ/ຫຼັງ ແລະ ການສະຫລຸບຫຍໍ້ເພື່ອລາຍງານຂັ້ນແຂວງ. ພະແນກກະສິກຳ ແລະ ປ່າໄມ້ ແຂວງ (PAFO) ເລືອກສະຖານທີ່ ສຳລັບການລົງກວດກາ ພາກສະໜາມ ແລະ ສົ່ງຈຸດປະສານໄປຫາ ແທັບເລັດ (Tablets)/ໂທລະສັບ ແລະ ເຄື່ອງມືສື່ສານອື່ນໆທີ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງນຳໃຊ້.

**2 ກວດສອບ (ພາກສະໜາມ, ໂດຍນຳໃຊ້ OruxMaps ສຳລັບ ທິດທາງ GPS ແລະ ແບບຟອມ ODK (Open Data Kit) ສຳລັບຕື່ມຂໍ້ມູນ/ໂຕເລກ)**

ພະແນກກະສິກຳ ແລະ ປ່າໄມ້ເມືອງ (DAFO) ແລະ ທີມງານ ຂອງ ກົມກວດກາປ່າໄມ້ (DOFI) ດຳເນີນການລົງສະຖານທີ່, ເກັບກຳຫຼັກຖານ ແລະ ຄຸນລັກສະນະ (ປະເພດປ່າໄມ້, ເຫດຜົນ, ຜູ້ກະທຳ, ໃບອະນຸຍາດ, ພື້ນທີ່, ພາບຖ່າຍ), ແລະ ອອກຄຳແນະນຳ ດ້ານການບໍລິຫານໃຫ້ແກ່ ຜູ້ກະທຳຜິດ.

**3 ລາຍງານ (ເຊີບເວີ, ກອງສຳຫຼວດ ແລະ ວາງແຜນປ່າໄມ້ (FIPD) / ກົມປ່າໄມ້ (DOF))**

ຂໍ້ມູນໂຕເລກໃນແທັບເລັດ (Tablet) ຈະເຊື່ອມໂຍງ ແບບອັດຕະໂນມັດກັບ ເຊີບເວີຂອງສູນກາງ; ໂຕເລກຂໍ້ມູນພື້ນທີ່ ແລະ ຄຸນລັກສະນະ ແມ່ນຈະຖືກເກັບຮັກສາໄວ້ຢູ່ໃນຖານຂໍ້ມູນສູນກາງ ສຳລັບການລາຍງານ ແລະ ການຕິດຕາມ.

### ບົດບາດໃນການຈັດຕັ້ງປະຕິບັດ

PAFO ເປັນຜູ້ນຳໃຊ້ລະບົບ PDMS, ສ່ວນ DAFO ແມ່ນປະສານງານຢູ່ພາກສະໜາມ (ພາລະບົດບາດ ມີຄວາມບໍ່ຕາຍຕົວ ໂດຍອີງຕາມແຕ່ລະແຂວງ) ຕ້ອງການໃຫ້ມີການປະສານງານສຳລັບປ່າໄມ້ແຂວງທັງຫມົດ.

### ປ່ອງການຕິດຕາມກວດກາ

ລະດູການສູງສຸດ ແມ່ນເລີ່ມແຕ່ເດືອນມັງກອນ ຫາ ເດືອນເມສາ; ການຕິດຕາມໃນລະດູຝົນ ແມ່ນຖືກຈຳກັດດ້ວຍ ຄວາມປົກຫຸ້ມຂອງຂີ້ເຝື້ອ.

---

## ຜົນໄດ້ຮັບຕົ້ນຕໍ ສະຖານະພາບ



© GIZ/Sompheng Voravong

- **ສະຖານທີ່ ທີ່ມີການດຳເນີນງານ** ຖືກຈັດຕັ້ງປະຕິບັດ ຢູ່ໃນ 6 ແຂວງພາກເໜືອ ໂດຍໄດ້ຮັບການສະໜັບສະໜູນຈາກ ໂຄງການ I-GFLL/GFLL. ຢູ່ແຂວງສະຫວັນນະເຂດ, ແມ່ນໄດ້ຮັບການສະໜັບສະໜູນຈາກ ໂຄງການອະນຸລັກປ່າໄມ້ ແລະ REDD+ ໄລຍະ 2 (F-REDD2, JICA) ໂດຍມີການຮ່ວມມືກັບ ໂຄງການພູມີທັດ ແລະ ແລະ ຊີວິດການເປັນຢູ່ ໃນ ສປປ ລາວ (LLL). ສ່ວນການຂະຫຍາຍ ແມ່ນໄດ້ມີການວາງແຜນກັບໂຄງການ.
- ການເຊື່ອມໂຍງ ສະໜອງຂໍ້ມູນເພີ່ມຕື່ມ ສຳລັບ REDD+ MRV ແລະ ການປະເມີນປະສິດທິພາບ ຂອງນະໂຍບາຍ ແລະ ມາດຕະການ (PAMs) ໃນພື້ນທີ່ຂອງແຜນງານຫລຸດຜ່ອນ ການປ່ອຍທາດອາຍເຮືອນແກ້ວ (ER).

---

## ສິ່ງທີ່ບັນລຸ/ ຜົນປະໂຫຍດ

ລະບົບ PDMS ນີ້ ໄດ້ຖືກຮັບຮອງຈາກ ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ເພື່ອນຳໃຊ້ ແລະ ນຳໃຊ້ຂໍ້ມູນທົ່ວໂລກ ຢູ່ໃນແຂວງທັງຫມົດ ຂອງປະເທດລາວ.

**ຖືກຕ້ອງ ແລະ ທັນເວລາ:** ການແຈ້ງເຕືອນທີ່ຂ້ອນຂ້າງທັນການ ສົມທົບກັບ ການລົງກວດສອບພາກສະໜາມ ຈະເປັນການເສີມຂະຫຍາຍການບັງຄັບໃຊ້ ແລະ ສະກັດກັ້ນ.

**ງ່າຍດາຍ ແລະ ສາມາດຂະຫຍາຍໄດ້:** ຂັ້ນຕອນທີ່ຈະແຈ້ງ (ກວດຫາ - ກວດສອບ - ລາຍງານ) ເຮັດໃຫ້ທີມງານຂັ້ນເມືອງ ແລະ ຂັ້ນແຂວງ ສາມາດນຳໃຊ້ໄດ້ຢ່າງຕໍ່ເນື່ອງ.

**ຄ່າໃຊ້ຈ່າຍຕ່ຳ:** ອາໄສຮູບພາບຈາກ Google Earth Engine (GEE) ແລະ ເຄື່ອງມືທີ່ເປີດກວ້າງ, ເຊັ່ນ: OruxMaps ແລະ ODK.

**ສອດຄ່ອງກັບ REDD+:** ສ້າງຄວາມເຂັ້ມແຂງ ແກ່ ລະບົບການວັດແທກ, ການລາຍງານ ແລະ ການພິສູດຢັ້ງຢືນ (MRV) ແລະ ການຕິດຕາມນະໂຍບາຍ ແລະ ມາດຕະການ (PAM).